# THE THEOLOGICAL DECLARATION OF BARMEN
# ການປະກາດກ່ຽວກັບສາສນາສາດແຫ່ງ ບາຣ໌ເມັນ

## 1. ການອຸທອນ ຕໍ່ຄຣິສຕະຈັກຂ່າວປະເສີດ ແລະຕໍ່ຄຣິສຕຽນ ທີ່ປະເທດເຢັຽຣະມັນ

8.01 ພາກສະພາສາຣະພາບຂັ້ນ ຊີໂນດ (ສະພາຕ່ຳ)ຂອງ ຄຣິສຕະຈັກຂ່າວປະເສີດທີ່ເຢັຽຣະມັນ ຊຶ່ງໄດ້ປະຊຸມກັນທີ່ ບາຣ໌ເມັນ ໃນເດືອນ 4 ວັນທີ 29-31ນ 1934. ໄດ້ມີຕາງໜ້າຄຣະສຕະຈັກແຫ່ງການສາຣະພາບ ຈາກທົ່ວ ປະເທດເຢັຽຣະມັນ ມາປະຊຸມກັນ ດ້ວຍການຕົກລົງສອດຄ່ອງກັນໃນການຍອມຮັບ ທຸກຄົນມາຈາກ ພຣະເຈົ້າອົງດຽວກັນ, ມາຈາກຄວາມບໍຣິສຸດ ແລະມາຈາກຄຣິສຕະຈັກແຕ່ສະໄໝອັຄະສາວົກ. ໃນຄວາມຈົງຮັກພັກດີ ຕໍ່ຫຼັກການສາຣະພາບຍອມຮັບໃນຄວາມເຊື່ອ ຂອງພວກເຂົາ, ສະມາຊິກຂອງຄະນະ ລູເຕີແຣນ, ຄະນະປະຕິຮູບ (ຣີຟອມ) ແລະຄະນະສາມັກຄີທັມຄຣິສຕະຈັກ (ຢູໂນເຕັດ)ໄດ້ຄົ້ນຫາຂ່າວສານ ທີ່ເປັນເອກະສັນກັນ ສຳລັບຄວາມຕ້ອງ ແລະຄວາມດຶງດູດຂອງຄຣິສຕະຈັກໃນສະໄໝປັດຈຸບັນ. ໂດຍການ ຮູ້ບຸນຄຸນຕໍ່ພຣະເຈົ້າ ພວກເຂົາໄດ້ຖືກທຳໃຫ້ເຊື່ອວ່າ ພວກເຂົາຖືກມອບໝາຍໃຫ້ເວົ້າວ່າເປັນສຽງດຽວກັນ. ນີ້ມັນບໍ່ແມ່ນຄວາມ ຕັ້ງໃຈຂອງພວກເຂົາ ທີ່ຈະຕ້ອງສ້າງຕັ້ງຄຣິສຕະຈັກໃໝ່ຂຶ້ນ ຫຼືສ້າງສະຫະພັນໃດໆຂຶ້ນ. ຈະບໍ່ມີຫຍັງທີ່ຢູ່ຫ່າງໄກມັນສະໝອງ ຂອງພວກເຂົາໄປກວ່າການທຳຣາຍຮູບແບບຂອງການສາຣະພາບ ຍອມຮັບຂອງຄຣິສຕະຈັກ. ຄວາມຕັ້ງໃຈຂອງພວກເຂົາແມ່ນ ຕ້ອງການຢືນຢັດຢູ່ໃນຄວາມເຊື່ອ ແລະຄວາມເປັນເອກະສັນກັນ ໃນການທຳຣາຍຂອງຫຼັກຄວາມເຊື່ອ, ແລະຄຣິສຕະຈັກຂ່າວປະເສີດ ແຫ່ງປະເທດເຢັຽຣະມັນ. ໃນການຕໍ່ຕ້ານການພະຍາຍາມທີ່ຈະສ້າງຕັ້ງ ຄວາມເປັນອັນນຶ່ງ ອັນດຽວກັນ ຂອງຄຣິສຕະຈັກ ຂ່າວປະເສີດແຫ່ງເຢັຽຣະມັນຊຶ່ງຖືວ່າມີທິສດີທີ່ຜິດພາດ, ໂດຍການໃຊ້ຄວາມຮຸນແຮງ ແລະການບໍ່ຈິງໃຈໃນການປະຕິບັດງານ, ທາງພາກສະພາສາຣະພາບຍອມຮັບ ໄດ້ຢືນຢັນໃນການຮວມກັນ ຂອງຄຣິສຕະຈັກ ຂ່າວປະເສີດ ໃນເຢັຽຣະມັນ ຈະຕ້ອງທຳໂດຍອີງຕາມພຣະຄຳຂອງພຣະເຈົ້າໂດຍຄວາມເຊື່ອ ໂດຍຜ່ານພຣະວິນຍານບໍຣິສຸດເທົ່ານັ້ນ ສິ່ງດັ່ງກ່າວ ນີ້ເທົ່ານັ້ນທີ່ສາມາດເອີ້ນວ່າຄຣິສຕະຈັກນັ້ນໄດ້ຖືກຟື້ນຄືນ ໃໝ່ອີກ.

8.02 ດັ່ງນັ້ນ ພາກສະພາສາຣະພາບ
ໄດ້ຮຽກຮ້ອງໃຫ້ຄຣິສຕະຈັກໃຫ້ສະໜັບສະໜູນສິ່ງດັ່ງກ່າວໂດຍການອະທິຖານ, ແລະໝັ້ນຄົງຢູ່ ອ້ອມຮອບ ບັນດາອາຈານ ແລະຄຣູສອນເຫຼົ່ານັ້ນ ທີ່ຊື່ສັດຕໍ່ຫຼັກຄວາມເຊື່ອ.

8.03 ຢ່າໃຫ້ຖືກລວງຍ້ອນການຄຳເວົ້າທີ່ບໍ່ມີເນື້ອໃນນັ້ນຖ້າເຮົາຫາກຈະຕໍ່ຕ້ານກັບການຮວມກັນຂອງປະເທດ ເຢັຽຣະມັນ. ຢ່າຟັງພວກຊາກູດາຍທີ່ເຮັດໃຫ້ຄວາມຕັ້ງໃຈຂອງພວກເຮົາສັບສົນ, ຫາກພວກເຮົາຕ້ອງການທີ່ ຈະທັບມ້າງການເປັນອັນນຶ່ງອັນດຽວກັນຂອງຄຣິສຕະຈັກຂ່າວປະເສີດແຫ່ງປະເທດເຢັຽຣະມັນ ຫຼືເພື່ອປະຖິ້ມ ຫຼັກຄວາມເຊື່ອແຫ່ງຄຸນພໍ່ທັງຫຼາຍ!

8.04 ໃຫ້ທົດລອງວິນຍານເຫຼົ່ານັ້ນເພື່ອຈະຮູ້ວ່າ ພວກເຂົາເປັນພຣະເຈົ້າຫຼືບໍ່! ໃຫ້ພິສູດຄຳເວົ້າຂອງພາກສະພາສາຣະພາບ ຍອມຮັບ ຂອງຄຣິສຕະຈັກຂ່າວປະເສີດແຫ່ງເຢັຽຣະມັນ ເພື່ອຈະຮູ້ວ່າພວກເຂົາໄດ້ສອດຄ່ອງກັບພຣະຄຳພີ ແລະກັບຫຼັກຄວາມເຊື່ອຂອງຄູນພໍ່ ເຫຼົ່ານັ້ນ. ຖ້າຫາກທ່ານພົບວ່າ ພວກເຮົາໄດ້ເວົ້າໃນສິ່ງທີ່ກົງກັນຂ້າມກັບພຣະຄຳພີ, ກໍຈົ່ງຢ່າໄດ້ຟັງ! ແຕ່ຖ້າຫາກທ່ານພົບວ່າ ພວກເຮົາທຳໂດຍອີງໃສ່ພຣະຄຳພີແລ້ວ, ຈົ່ງຢ່າຢ້ານ ຫຼືຢ່າຫຼົງກົນທີ່ທຳໃຫ້ທ່ານ ເດີນກັບພວກເຮົາໃນເສັ້ນທາງແຫ່ງ ຄວາມເຊື່ອ ແລະໂດຍການປະຕິບັດຕາມພຣະທັມຂອງພຣະເຈົ້າ, ເພື່ອໄພ່ພົນຂອງພຣະອົງ ຈະໄດ້ມີແນວຄິດອັນດຽວກັນໃນໂລກ ແລະເພື່ອພວກເຮົາຈະມີປະສົບການໃນຄວາມເຊື່ອ ດັ່ງທີ່ພຣະອົງຊົງກ່າວໂດຍຕົນເອງວ່າ "ເຮົາຈະບໍ່ຖິ້ມທ່ານ ຫຼືປະປ່ອຍທ່ານ". ດັ່ງນັ້ນ, "ລູກນ້ອຍທັງຫຼາຍເອີຍ, ຈົ່ງຢ່າຊຸຢ້ານ, ເພາະວ່າພຣະບິດາຂອງທ່ານ ຍິນດີທີ່ຈະມອບອານາຈັກໃຫ້ທ່ານ"

2. ການປະກາດສາມາສາດ ຕໍ່ເຫດການປັດຈຸບັນ ຂອງຄຣິສຈະຈັກຂ່າວປະເສີດ ເຢັຽຣະມັນ

8.05 ອີງໃສ່ການອະຣັມພະບົດຂອງກົດທັມມະນູນ ໃນເດືອນ 7, 1933, ຄຣິສຕະຈັກຂ່າວປະເສີດແຫ່ງເຢັຽຣະມັນ ແມ່ນສະຫະພັນ ແຫ່ງຄຣິສຕະຈັກແຫ່ງການສາຣະພາບຍອມຮັບ ຊຶ່ງເຕີບໃຫຍ່ມາຈາກຄະນະປະຕິຮູບ (ຣີຟອມ) ແລະມີການຊົມໃຊ້ ຄວາມສເມີພາບໃນສິດທິ ພື້ນຖານສາສນາສາດ ເພື່ອການຮວມກັນຂອງຄຣິສຕະຈັກເຫຼົ່ານີ້ ໄດ້ບັນທຶກໄວ້ຢູ່ໃນມາດຕຣາ 1 ແລະມາຕຣາ 2 (1)ໃນກົດທັມມະນູນຂອງຄຣິສຕະຈັກຂ່າວປະເສີດ ຊຶ່ງໄດ້ຖືກຮັບຮູ້ໂດຍ ຣັຖບານ ຣີຈ໌ ໃນວັນທີ 14/7/1933:

ມາຕຣາ1. ພື້ນຖານທີ່ບໍ່ສາມາດລ່ວງຣະເມີດໄດ້ຂອງຄຣິສຕະຈັກຂ່າວປະເສີດແຫ່ງເຢັຽຣະມັນ ຄືພຣະຄຳພີແຫ່ງພຣະເຢຊູຄຣິສ ດັ່ງທີ່ໄດ້ສະແດງໃຫ້ພວກເຮົາເຫັນໃນພຣະທັມອັນສັກສິດ ແລະນຳມາສູ່ແສງສວ່າງອີກໃນຫຼັກຄວາມເຊື່ອຂອງຄະນະປະຕິຮູບ. ອຳນາດທັງໝົດທີ່ຄຣິສຕະຈັກຕ້ອງການໃນການປະກາດໄດ້ປະກາດ ໃນທີ່ນີ້ ແລະຢູ່ໃນຂອບເຂດ.

ມາດຕຣາ 2. ຄຣິສຕະຈັກຂ່າວປະເສີດແຫ່ງເຢັຽຣະມັນ ໄດ້ແບ່ງອອກເປັນຄຣິສຕະຈັກຕ່າງໆທີ່ເປັນສະມາຊິກ.

8.06 ພວກເຮົາ,ໃນຖານະເປັນຜູ້ຕາງໜ້າຂອງຄະນະ ລູເຕີແຣນ, ຄະນະປະຕະຮູບ (ຣີຟອມ) ແລະຄະນະສາມັກຄີທັມຄຣິສຕະຈັກ, ທີ່ບໍ່ມີສະພາຕ່ຳ, ບໍ່ມີຄະນະສະພາຄຣິສຕະຈັກ, ແລະບໍ່ມີອົງການທ້ອງຖິ່ນ ທີ່ຮວມກັນຢູ່ໃນພາກສະພາ ສາຣະພາບຍອມຮັບ ແຫ່ງຄຣິສຕະຈັກຂ່າວປະເສີດແຫ່ງເຢຣະມັນ, ໄດ້ປະກາດວ່າ ພວກເຮົາຄວນຢືນ ຄຽງບ່າຄຽງໄລ່ກັນ ຢູ່ບົນແຜ່ນດິນແຫ່ງ ຄິຣສຕະຈັກຂ່າວປະເສີດແຫ່ງເຢັຽຣະມັນ ໃນຖານະເປັນສະຫະພັນຂອງ ຄຣິສຕະຈັກແຫ່ງການສາຣະພາບ ຍອມຮັບແຫ່ງເຢັຽຣະມັນ. ພວກເຮົາໄດ້ມີການຜູກພັນກັນໂດຍການຍອມຮັບ ໃນພຣະເຈົ້າອົງດຽວ, ຄວາມບໍຣິສຸດດຽວ, ຄຣິສຕະຈັກສາກົນອັນດຽວກັນ, ແລະຄຣິສຕະຈັກດັ້ງເດີມອັນດຽວກັນ.

8.07 ພວກເຮົາໄດ້ປະກາດຕໍ່ໜ້າທຸກຄຣິສຕະຈັກຂ່າວປະເສີດໃນປະເທດເຢັຽຣະມັນວ່າ ສິ່ງທີ່ພວກເຂົາຍຶດຖືຄືກັນໃນຫຼັກແຫ່ງການສາຣະພາບຍອມຮັບນີ້ ເປັນໜ້າໂສກເສົ້າແລະອັນຕະຣາຍໃຫ້ແກ່ການຮອມກັນຂອງຄຣິສຕະຈັກຂ່າວປະເສີດແຫ່ງເຢັຽຣະມັນ. ມັນໄດ້ຖືກຂົ່ມຂູ່ ໂດຍຮູບແບບການສິດສອນແລະກິຈການໃນການດຳເນີນງານຂອງຄຣິສຕະຈັກແຫ່ງພັກ "ຄຣິສຕຽນເຢັຽຣະມັນ" ແລະໂດຍການປົກຄອງຄຣິສຕະຈັກທີ່ພວກເຂົາໄດ້ເປັນຜູ້ດຳເນີນງານນັ້ນ. ນີ້ໄດ້ສະແດງໃຫ້ເຫັນໄດ້ ຢ່າງແຈ່ມແຈ້ງໃນໄລຍະປີທຳອິດຂອງການປາກົດຕົວຂອງຄຣິສຕະຈັກຂ່າວປະເສີດເຢັຽຣະມັນ. ການຂົ່ມຂູ່ນີ້ ເກີດຂຶ້ນຢູ່ໃນ ຄວາມເປັນຈິງໃນພື້ນຖານຫຼັກສາສນາສາດ ຊຶ່ງໃນນັ້ນ ຄຣິສຂ່າວປະເສີດແຫ່ງເຢັຽຣະມັນໄດ້ເຕົ້າໂຮມກັນ, ສິ່ງນີ້ໄດ້ສືບຕໍ່ແລະໂດຍ ຫຼັກການແລ້ວໄດ້ຖືກຂັດຄ້ານ ແລະທຳໃຫ້ບໍ່ເກີດຜົນໂດຍຫຼັກການທີ່ບໍ່ຊິ້ນເຄີຍ ໃນພາກສ່ວນຂອງພວກຜູ້ນຳ ແລະພວກໂຄສົກ ຂອງ "ຄຣິສຕຽນເຢັຽຣະມັນ" ເຊັ່ນດຽວກັນກັບພວກປົກຄອງຄຣິສຕະຈັກ. ໃນເວລາທີ່ຫຼັກການສຳຄັນເຫຼົ່ານີ້ຖືກຢຶກໃຫ້ໃຊ້ ເປັນທາງການ, ດັ່ງນັ້ນ, ໂດຍອີງຕາມການສາຣະພາບຍອມຮັບທັງໝົດທີ່ຖືກນຳໃຊ້ທ່າມກາງພວກເຮົາ, ຄຣິສຕະຈັກ ກໍບໍ່ໄດ້ເປັນ ຄຣິສຕະຈັກອີກຕໍ່ໄປ ແລະຄຣິສຕະຈັກຂ່າວປະເສີດແຫ່ງເຢັຽຣະມັນ, ໃນຖານະເປັນສະຫະພັນແຫ່ງຄຣິສຕະຈັກສາຣະພາບຍອມຮັບ ຊຶ່ງໃນຕົວແລ້ວໄດ້ກາຍເປັນສິ່ງທີ່ເປັນໄປບໍ່ໄດ້.

8.08 ໃນຖານະທີ່ພວກເຮົາເປັນສະມາຊິກຂອງຄະນະລູເທີແຣນ, ຄະນະປະຕິຮູບ, ແລະຄະນະສາມັກຄີທັນຄຣິສຕະຈັກ, ວັນນີ້ ພວກເຮົາຄວນ ແລະຈຳຕ້ອງເວົ້າເປັນສຽງດຽວກັນກ່ຽວກັບສິ່ງດັ່ງກ່າວນີ້. ໂດຍສະເພາະທີ່ພວກເຮົາຕ້ອງການທີ່ຈະເປັນ ແລະທີ່ຈະຢືນຢັດຢູ່ໃນຄວາມເຊື່ອຕໍ່ ການສາຣະພາບຍອມຮັບຕ່າງໆນັ້ນ, ພວກເຮົາບໍ່ຄວນມິດງຽບຢູ່, ທັ້ງທີ່ພວກເຮົາເຊື່ອວ່າ ພວກເຮົາໄດ້ຮັບບົດຮຽນອັນດຽວກັນເພື່ອການອອກສຽງປະກາດໃນເວລາທີ່ພວກເຮົາມີຄວາມຕ້ອງການ ແລະການທົດລອງ ອັນດຽວກັນ. ພວກເຮົາໄດ້ສັ່ງຕໍ່ພຣະເຈົ້າໃນຄວາມຈຳເປັນໃນການພົວພັນຊຶ່ງກັນແລະກັນຂອງຄຣິສຕະຈັກແຫ່ງການສາຣະພາບ ຍອມຮັບນີ້.

8.09 ໃນການສັງເກດຄວາມຜິດພາດຂອງ "ຄຣິສຕຽນເຢັຽຣະມັນ" ທີ່ຢູ່ໃນການປົກຄອງຂອງຄຣິສຕະຈັກເມືອງຣິດຈ໌ ໃນປັດຈຸບັນ ຊຶ່ງເປັນຄຣິສຕະຈັກທີ່ ກຳລັງພິນາດ ແລະຊຶ່ງກຳລັງສ້າງຄວາມແຕກນ້າງໃຫ້ແກ່ການຮອມກັນຂອງຄຣິສຕະຈັກ ຂ່າວປະເສີດແຫ່ງເຢັຽຣະມັນ, ພວກເຮົາສາຣະພາບຍອມຮັບຕໍ່ຄວາມຈິງແຫ່ງຂ່າວປະເສີດດັ່ງນີ້:

8.10 1. "ເຮົາເປັນທາງນັ້ນ, ເປັນຄວາມຈິງ, ແລະເປັນຊີວິດ; ບໍ່ມີໃຜຈະໄປຫາພຣະບິດາໄດ້, ນອກຈາກມາທາງເຮົາ" (ໂຢຮັນ 14:6) "ຄວາມຈິງແລ້ວ, ເຮົາບອກທ່ານທັງຫຼາຍວ່າຕາມຄວາມຈິງວ່າ, ຜູ້ທີ່ບໍ່ເຂົ້າໄປໃນຄອກແກະທາງປະຕູ ແຕ່ປີນເຂົ້າໄປທາງອື່ນ ຜູ້ນັ້ນກໍເປັນຂະໂມຍແລະໂຈນ....ເຮົານີ້ແຫຼະເປັນປະຕູ ຖ້າຜູ້ໃດເຂົ້າທາງເຮົາຜູ້ນັ້ນຈະໄດ້ພົ້ນ" (ໂຢຮັນ 10: 1,9)

8.11 ດັ່ງທີ່ພຣະເຢຊູຄຣິສໄດ້ກ່າວກັບພວກເຮົາໂດຍຜ່ານພຣະທັມຂອງພຣະອົງວ່າ ພຣະອົງຊົງເປັນພຣະທັມແຫ່ງພຣະເຈົ້າ ທີ່ພວກເຮົາຄວນໄດ້ຍິນ ແລະຄວນໄວ້ວາງໃຈ ແລະຄວນເຊື່ອຟັງ ທັ້ງໃນເວລາມີຊີວິດຢູ່ ແລະຕາຍໄປແລ້ວ.

8.12 ພວກເຮົາບໍ່ຍອມຮັບເອົາທິສດີທີ່ຜິດພາດ ຊຶ່ງນອກເໜືອຈາກພຣະທັມຂອງພຣະເຈົ້າ, ຊຶ່ງໂດຍຜ່ານຄຣິສຕະຈັກນັ້ນ ອາດຖືກຍອມ ຮັບຮູ້ວ່າເປັນແຫຼ່ງສຳຣັບການປະກາດ ແລະຍັງຖືວ່າເປັນເຫດການສຳຄັນ ແລະມີອຳນາດ, ມີຮູບຮ່າງ ແລະຕົວຈິງ, ດັ່ງທີ່ພຣະເຈົ້າໄດ້ຊົງສະແດງໃຫ້ຮູ້.

8.13 2. "ໂດຍພຣະອົງນັ້ນ ທ່ານທັງຫຼາຍຈຶ່ງຢູ່ໃນພຣະເຢຊູຄຣິສ ເພາະພຣະເຈົ້າໄດ້ຊົງຕັ້ງພຣະອົງໃຫ້ເປັນສະຕິປັນຍາແລະ ຄວາມຊອບທັມຂອງເຮົາ, ແລະເປັນຜູ້ຊົງຕັ້ງເຮົາໄວ້ເປັນໄພ່ພົນຂອງພຣະເຈົ້າ, ແລະຊົງໄຖ່ເຮົາໃຫ້ພົ້ນ". (1ໂກຣິນໂທ 1:30)

8.14 ໃນຖານະທີ່ພຣະເຢຊູຄຣິສ ເປັນຜູ້ທີ່ພຣະເຈົ້າໄດ້ຊົງໃຫ້ຄຳໝັ້ນສັນຍາໄວ້ໃນການອະພັຍໂທດບບທັງໝົດ, ຊຶ່ງໂດຍທາງ ດຽວກັນນັ້ນ ພຣະອົງຊົງເປັນພຣະເຈົ້າແຫ່ງຊີວິດຂອງເຮົາທັງຫຼາຍ. ໂດຍທາງພຣະອົງພວກເຮົາຈຶ່ງໄດ້ຮັບຄວາມສຸກແລະເປັນ ອິສະຣະອານາດມືກແຫ່ງໂລກ, ແລະທຳການຮັບໃຊ້ຕໍ່ສິ່ງທີ່ພຣະອົງຊົງສ້າງດ້ວຍຄວາມກະຕັນຍູ.

8.15 ພວກເຮົາບໍ່ຍອມຮັບເອົາທິສດີທີ່ຜິດພາດ, ຊຶ່ງໂດຍຜ່ານສິ່ງດັ່ງກ່າວ ຈະເຮັດໃຫ້ຊີວິດເຮົາບໍ່ໄດ້ຂຶ້ນກັບພຣະເຢຊູຄຣິສ ແຕ່ກັບຂຶ້ນກັບພຣະເຈົ້າອົງອື່ນໆ ຊຶ່ງຈະທຳໃຫ້ເຮົາບໍ່ຕ້ອງການຄວາມຊອບທັມ ແລະຄວາມບໍຣິສຸດຈາກພຣະອົງ.

8.16 3. "ແຕ່ໃຫ້ພວກເຮົາຢຶດເອົາຄວາມຈິງດ້ວຍໃຈຮັກ ເພື່ອຈະຈະເຣີນຂຶ້ນທຸກຢ່າງຈົນເຖິງພຣະອົງຜູ້ເປັນສີສະຄືພຣະຄຣິສ ເນື່ອງຈາກພຣະອົງນັ້ນຮ່າງກາຍທັງສິ້ນທີ່ຕິດຕໍ່ສນິດແລະຜູກພັນກັນໂດຍທຸກໆຂໍ້ຕໍ່ທີ່ຊົງປະທານຈຶ່ງໄດ້ຈະເຣີນ ໃຫຍ່ຂຶ້ນດ້ວຍຄວາມຮັກ ເມື່ອອະວັຍະວະທຸກສ່ວນເຮັດໜ້າທີ່ຕາມຄວາມເໝາະສົມແລ້ວ." (ເອເຟໂຊ 4:15,16)

8.17 ໂບດຄຣິສຖຽນ ແມ່ນຄຣິສຕະຈັກພີ່ນ້ອງກັນ ຊຶ່ງພຣະເຢຊູຄຣິສຊົງສະແດງຕົວເປັນເຈົ້ານາຍໂດຍດ້ວຍພຣະທັມ ແລະໂດຍພິທີສິນ ໂດຍທາງພຣະວິນຍານບໍຣິສຸດ. ໃນຖານະທີ່ເປັນຄຣິສຕະຈັກທີ່ໄດ້ຮັບການອະພັຍໂທດບາບແລ້ວນັ້ນ, ມັນຈະຕ້ອງມີການປະກາດທ່າມກາງໂລກແຫ່ງຄວາມຜິດບາບ, ດ້ວຍຄວາມເຊື່ອ ແລະດ້ວຍການຂັບຕາມ, ດ້ວຍຄຳສອນດທັ້ງດຽວ ກັບການມີຣະບຽບຂອງຄຣິສຕະຈັກ, ຊຶ່ງເປັນຂອງພຣະອົງ. ຄຣິສຕະຈັກນັ້ນຕ້ອງດຳຣົງຊີວິດ ແລະຕ້ອງການມີຊີວິດ ຢູ່ທ່າມກາງ ການເລົ້າໂລມຂອງພຣະອົງ ແລະທ່າມກາງການຊີ້ນຳ ນຳພາຂອງພຣະອົງໂດຍຫວັງຈະເຫັນການມາປາກົດຂອງພຣະອົງ.

8.18 ພວກເຮົາບໍ່ຍອມຮັບເອົາທິສດີທີ່ຜິດພາດຊຶ່ງໂດຍຜ່ານທາງຄຣິສຕະຈັກນັ້ນ ໄດ້ຖືກອະນຸຍາດໃຫ້ລະຖິ້ມຮູບແບບແຫ່ງຄຳສອນ ແລະສ້າງຣະບຽບການຕາມໃຈມັກຂອງຕົນ ຫຼືທຳການປ່ຽນແປງແນວຄິດທີ່ເດັ່ນກວ່າ ແລະການລົງໂທດທາງດ້ານ ການເມືອງ.

8.19 4. "ພວກທ່ານຮູ້ຢູ່ວ່າພວກຜູ້ຄຸ້ມຄອງຄົນຕ່າງຊາດກໍບັງຄັບບັນຊາເຂົາ ແລະພວກຜູ້ໃຫຍ່ກໍໃຊ້ອຳນາດເໜືອເຂົາ. ແຕ່ໃນຣະຫວ່າງພວກທ່ານບໍ່ເປັນຢ່າງນັ້ນ ຖ້າຜູ້ໃດຢາກເກີດເປັນຜູ້ໃຫຍ່ໃນພວກທ່ານຜູ້ນັ້ນຈະຕ້ອງເປັນຜູ້ຮັບໃຊ້ທ່ານທັງຫຼາຍ" (ມັດທາຍ 20: 25,26)

8.20 ຫ້ອງການຕ່າງໆໃນຄຣິສຕະຈັກ ບໍ່ໄດ້ຖືກສ້າງຂຶ້ນເພື່ອຄອບຄອງຊຶ່ງກັນແລະກັນ, ກົງກັນຂ້າມ ຕ້ອງເປັນບ່ອນທີ່ທຳງານຮັບໃຊ້ພຣະເຈົ້າຢ່າງຊື່ສັດ ແລະສ້າງຄວາມນ່ອນຊື່ນໃນຫົວຄຣິສຕະຈັກ.

8.21 ພວກເຮົາປະຕິເສດທິສດີທີ່ຜິພາດທີ່ພາໃຫ້ຄຣິສຕະຈັກອອກຫ່າງຈາກວຽກງານຂອງມັນຊຶ່ງໄດ້ຖືກອະນຸມັດໃຫ້ທຳຫຼືໄດ້ຖືກອະນຸຍາດໃຫ້ ແລະຜູ້ຮັບໃຊ້ ທີ່ນຸ່ງເຄື່ອງຢ່າງກັບພວກມີອຳນາດ.

8.22 5. "ຈົ່ງຢຳເກງພຣະເຈົ້າ ແລະຖວາຍກຽດໃຫ້ກະສັດ" (1 ເປໂຕ 2:17) ພຣະຄຳພີໄດ້ສອນພວກເຮົາ, ເຖິງແມ່ນຍັງຢູ່ໃນໂລກທີ່ບໍ່ທັນຖືກໄຖ່ແລ້ວ ຊຶ່ງຄຣິສຕະຈັກໄດ້ຖືກກໍ່ຕັ້ງຂຶ້ນກໍຕາມ, ຣັດ ໄດ້ຖືກສ້າງຂຶ້ນໂດຍພຣະເຈົ້າທີ່ຊົງທຳໜ້າທີ່ປະຕິບັດຄວາມຍຸຕິທັມແລະສັນຕິສຸກ. ຊຶ່ງການປະຕິບັດນີ້ ໄດ້ຮວມທັງການໃຊ້ອຳນາດຮຸນແຮງ, ໂດຍອີງໃສ່ຣະດັບຄວາມສາມາດໃນການຕັດສິນຄວາມ ແລະຣະດັບຄວາມຄ່ອງແຄ້ວຂອງມະນຸດ. ຄຣິສຕະຈັກ ຍອມຮັບຮູ້ຜົນປະໂຫຍດທີ່ໄດ້ຮັບຂອງແຕ່ງຕັ້ງນີ້ດ້ວຍຄວາມຊື່ສັດ ແລະໃຫ້ການເຄົາຣົບນັບຖືຕໍ່ໜ້າພຣະອົງ. ມັນເປັນການສະແດງໃຫ້ເຫັນເຖິງຣາຊອານາຈັກຂອງພຣະເຈົ້າ, ພຣະບັນຍັດຂອງແລະຄວາມຊອບທັມຂອງພຣະອົງ, ແລະຊຶ່ງໄດ້ມີຄວາມຮັບຜິດຊອບຂອງຜູ້ປົກຄອງ ແລະຣະບຽບການ. ມັນມີການໄວ້ວາງໃຈ ແລະເຊື່ອຟັງອຳນາດແຫ່ງໂລກຊຶ່ງເປັນບ່ອນທີ່ພຣະເຈົ້າໄດ້ຄ້ຳຈູນທຸກສິ່ງ.

8.23 ພວກເຮົາບໍ່ຍອມຮັບເອົາທິສດີທີ່ຜິດພາດ ທີ່ເຮັດໃຫ້ຣັດທຳໜ້າທີ່ເກີນກວ່າສິ່ງທີ່ຄວນທຳ ຊຶ່ງຈະກາຍເປັນຜູ້ກຳອຳນາດພຽງຜູ້ດຽວຕໍ່ຊີວິດມະນຸດ ຊຶ່ງລວມທັງວຽກງານຂອງຄຣິສຕະຈັກດ້ວຍ.

8.24 ພວກເຮົາບໍ່ຍອມຮັບເອົາທິສດີທີ່ຜິດພາດ ຊຶ່ງເຮັດໃດ້ຄຣິສຕະຈັກເຮັດໜ້າທີ່ນອກເໜືອໄປກວ່າທີ່ຄວນທຳ, ຕ້ອງໃຫ້ຄຣິສຕະຈັກມີຄຸນສົມບັດທີ່ເໝາະສົມ, ມີໜ້າທີ່, ແລະໃຫ້ກຽດແກ່ຣັດ ຊຶ່ງຕົນເອງກາຍເປັນອົງປະກອບນຶ່ງຂອງຣັດ.

8.25 6. "ນີ້ແຫຼະ ເຮົາຢູ່ກັບທ່ານທັງຫຼາຍທຸກໆວັນຈົນໝົດກັບ" (ມັດທາຍ 28:20) "ແຕ່ພຣະທັມຂອງພຣະເຈົ້ານັ້ນບໍ່ມີຜູ້ໃດຜູກມັດໄວ້ໄດ້" (2 ຕີໂມທຽວ 2:9)

8.26 ໜ້າທີ່ຂອງຄຣິສຕະຈັກ, ບົນພື້ນຖານແຫ່ງອິສະຣະພາບ, ຈະຕ້ອງນຳຄຳສັ່ງສອນແຫ່ງພຣະຄຸນພຣະເຈົ້າໄປສູ່ທຸກຄົນໃນນາມຕົວແທນແຫ່ງພຣະຄຣິສ, ແລະດັ່ງນັ້ນໃນການທຳງານພຣະເຈົ້າ ຕ້ອງອາສັຍພຣະທັມແລະພິທີສິນ.

8.27 ພວກເຮົາບໍ່ຍອມຮັບເອົາທິສດີທີ່ຜິດພາດທີ່ເຮັດໃຫ້ຄຣິສຕະຈັກ, ໂດຍການເຍີ້ຍິ່ງຂອງມະນຸດ, ຈະເຮັດໃຫ້ພຣະທຳ ແລະການຮັບໃຊ້ພຣະເຈົ້າ ກາຍເປັນການບໍຣິການຕໍ່ຄວາມມັກ, ຈຸດປະສົງ, ແລະເປົ້າໝາຍຂອງມະນຸດຢ່າງບໍ່ເຈຕນາ.

8.28 ພາກສະພາແຫ່ງການສາຣະພາບຍອມຮັບ ຂອງຄຣິສຕະຈັກຂ່າວປະເສີດແຫ່ງເຢັຽຣະມັນ ໄດ້ປະກາດວ່າໄດ້ຍອມຮັບເອົາໃນການຮັບຮູ້ວ່າ ສິ່ງນີ້ເປັນຄວາມຈິງ ແລະໃນການປະຕິເສດຕໍ່ສິ່ງຜິດພາດນັ້ນ. ຍອມຮັບວ່ານີ້ແມ່ນ ຄວາມຈຳເປັນຢ່າງຍິ່ງຂອງພື້ນຖານສາສນາສາດ ແຫ່ງຄຣິສຕະຈັກຂ່າວປະເສີດ ເຢັຽຣະມັນ ໃນຖານະເປັນຄຣິສຕະຈັກແຫ່ງການສາຣະພາບຍອມຮັບ.  ມັນໄດ້ເປັນການເປີດສາກໃຫ້ແກ່ທຸກຄົນທີ່ສາມາດຍອມຮັບເອົາການປະກາດນີ້ ເພື່ອຈະມີຄວາມຄິດເຫັນຕໍ່ຫຼັກການສຳຄັນຂອງສາສນາສາດ ໃນການຕັດສິນບັນຫານະໂຍບາຍຂອງຄຣິສຕະຈັກຂອງພວກເຂົາ. ມັນເປັນການອ້ອນວອນຕໍ່ທຸກຄົນ ຜູ້ຊຶ່ງຕ້ອງການຈະກັບຄືນສູ່ຄວາມສາມັກຄີທັມແຫ່ງຄວາມເຊື່ອ, ຄວາມຮັກ, ແລະຄວາມຫວັງ.